ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 2292/ທຄຕລ 2022

ນະຄອນຫຼວງວຽງຈັນ, ວັນທີ: 08 SEP 2022

# ໜັງສືແຈ້ງເຊີນ

**ເຖິງ:** ເຈົ້າຂອງໂຮງງານຕັດຫຍິບ, ຜູ້ປະກອບການທຸລະກິດກ່ຽວກັບການຜະລິດເສື້ອຜ້າ, ປັກແສ່ວ, ຕັດຫຍິບ ແລະ ພິມລາຍ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ຜະລິດເສື້ອ ທຄຕລ ຈຳນວນ 5.000 ຜືນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດເສື້ອ ທຄຕລ ຈຳນວນ 5.000 ຜືນ ເພື່ອນຳໃຊ້ ສຳລັບ ພະນັກງານ ຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ຮູບແບບ | |
|---|---|
| **ເສື້ອໂປໂລ ສີຂາວ-ຊາຍ** | **ເສື້ອໂປໂລ ສີແດງ-ຊາຍ** |
| ເສື້ອ ໂປໂລ ທຄຕລ 2022  | ເສື້ອ ໂປໂລ ທຄຕລ 2022  |
| **ເສື້ອໂປໂລ ສີຂາວ-ຍິງ** | **ເສື້ອໂປໂລ ສີແດງ-ຍິງ** |
| ເສື້ອ ໂປໂລ ທຄຕລ 2022  | ເສື້ອ ໂປໂລ ທຄຕລ 2022  |

| | |
|---|---|
| - ເສື້ອຄໍເຊີດສີຂາວ ຕາມຮູບແບບດ້ານເທິງ<br>- ຈຳນວນ 2.500 ຜືນ<br>- Size ອາຊີ: ຍິງ 1.100 ຜືນ ແລະ ຊາຍ 1.400 ຜືນ | - ເສື້ອຄໍເຊີດສີແດງ ຕາມຮູບແບບດ້ານເທິງ<br>- ຈຳນວນ 2.500 ຜືນ<br>- Size ອາຊີ: ຍິງ 1.100 ຜືນ ແລະ ຊາຍ 1.400 ຜືນ |
| - ເນື້ອຜ້າຝ້າຍ Lacoste, ພ້ອມປັກແສ່ວ BCEL 01 ຈຸດ ຕາມອາດເອີກ.<br>- ຜະລິດຕາມ Spec ຜ້າທີ່ ທຄຕລ ກຳນົດ, ສາມາດເຂົ້າມາຮັບຕົວຢ່າງເນື້ອຜ້າໄດ້ທີ່ ທຄຕລ ສຳນັກງານໃຫຍ່, ພະແນກ ຫ້ອງການບໍລິຫານ-ການເງິນ, ຕຶກ C, ຊັ້ນ 04 (ໃນໂມງລັດຖະການ). | |

- **ຮອບທີ 01: (ການປະກອບເອກະສານ)**
  - ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ ຜະລິດ ແລະ ຈັດຈຳໜ່າຍ ເສື້ອຜ້າ ແລະ ມີປະສົບການດ້ານທຸລະກິດດັ່ງກ່າວ ຢ່າງໜ້ອຍ 02 ປີ ຂຶ້ນໄປ: ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ (ຖ້າມີ).
  - ລະບຸຄຸນສົມບັດຂອງແພເສື້ອຢ່າງລະອຽດ, ກຳນົດເວລາສົ່ງເຄື່ອງ, ເງື່ອນໄຂການຮັບປະກັນສິນຄ້າຂອງຕົນ ແລະ ເງື່ອນໄຂອື່ນໆໃຫ້ລະບຸລະອຽດ (ຖ້າມີ) ຕາມຮ່າງເອກະສານຄັດຕິດມາພ້ອມນັ້ນ ພ້ອມທັງເອົາຜ້າຕົວຈິງ ຫຼື ຜະລິດເສື້ອຕາມແບບຂ້າງເທິງມາພ້ອມ.
  - ກຳນົດຍື່ນລາຍລະອຽດຂ້າງເທິງ ກ່ອນ ວັນຈັນ ວັນທີ 19/09/2022 ກ່ອນເວລາ 16.00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 04 ອາຄານ C ຫຼື ສົ່ງຜ່ານຊ່ອງທາງ E-mail: bidcommittee@bcel.com.la (ສຳລັບການປະກອບເອກະສານ).

- **ຮອບທີ 2: ກຳນົດຍື່ນຊອງລາຄາ (ປິດຊອງ)**
  - ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ເປີດຊອງຊ້ອງໜ້າຄະນະກຳມະການ ໃນ ວັນພຸດ, ທີ 21/09/2022 ເວລາ 10:00ໂມງ ທີ່ ຊັ້ນ 05, ອາຄານ C.
  - ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 07%, ໃບສະເໜີລາຄາຂອງຜູ້ສະໜອງມີອາຍຸຢ່າງໜ້ອຍ 01 ເດືອນ ຫຼັງຈາກມື້ຍື່ນຊອງປະມູນ.
  - ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຢ່າງໜ້ອຍ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ ຫຼື ແຊັກທີ່ວີຊ່າແລ້ວ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/10/2022) ທຄຕລ ບໍ່ຮັບເງິນສົດ, ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ**:

- ຜູ້ຊະນະປະມູນຕ້ອງໄດ້ຜະລິດເສື້ອຕົວຈິງມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ການຊຳລະແບ່ງຈ່າຍເປັນ ງວດດຽວ ພາຍຫຼັງໄດ້ຮັບເຄື່ອງ ແລະ ຜ່ານການກວດກາຄວາມຖືກຕ້ອງຈາກຄະນະກຳມະການ ທຄຕລ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ເບີໂທປະສານງານ: 021 213 200-415

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (POLO ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

# ເສື້ອ ໂປໂລ ທຄຕລ 2022

- ເສື້ອສີຂາວ
- ແຂບແຂນຂາວ-ເສັ້ນແດງ
- ແຂບຄໍສີ ຂາວ-ເສັ້ນແດງ
- ຕົວໜັງສືສີແດງ



# ເສື້ອ ໂປໂລ ທຄຕລ 2022

- ເສື້ອສີແດງ
- ແຂບແຂນແດງ-ເສັ້ນຂາວ
- ແຂບຄໍສີ ແດງ-ເສັ້ນຂາວ
- ຕົວໝັງສືສີຂາວ



# ເສື້ອ ໂປໂລ ທຄຕລ 2022

- ເສື້ອສີຂາວ
- ແຂບແຂນຂາວ-ເສັ້ນແດງ
- ແຂບຄໍສີ ຂາວ-ເສັ້ນແດງ
- ຕົວໜັງສືສີແດງ



# ເສື້ອ ໂປໂລ ທຄຕລ 2022

- ເສື້ອສີແດງ
- ແຂບແຂນແດງ-ເສັ້ນຂາວ
- ແຂບຄໍສີ ແດງ-ເສັ້ນຂາວ
- ຕົວໜັງສືສີຂາວ

